ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີເປີດໂຕຜະລິດຕະພັນໂອນເງິນຂ້າມທະນາຄານເທິງມືຖື




ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ (LAPNet) ຈັດພິທີເປີດໂຕຜະລິດຕະພັນໂອນເງິນຂ້າມທະນາຄານເທິງມືຖື ຢ່າງເປັນທາງການ ທີ່ ໂຮງແຮມແລນມາກ, ນະຄອນຫຼວງວຽງຈັນ ໃນວັນທີ 8 ທັນວາ 2020 ແລະ ມອບໃບຍ້ອງຍໍໃຫ້ແກ່ 7 ທະນາຄານ ແບບຢ່າງ ທີ່ສາມາດເປີດໃຫ້ບໍລິການຜະລິດຕະພັນໂອນເງິນຂ້າມທະນາຄານເທິງມືຖືໃຫ້ແກ່ມວນຊົນນໍາໃຊ້ໃນທົ່ວສັງຄົມ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ພ້ອມນີ້, ກໍ່ມີບັນດາຕາງໜ້າຜູ້ຖືຮຸ້ນຂອງບໍລິສັດ, ບັນດາກົມພາຍໃນ, ບັນດາກະຊວງຈໍານວນໜຶ່ງ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ການດໍາເນີນທຸລະກິດຂອງ LAPNet ຊຶ່ງເປັນຜູ້ຄວບຄຸມລະບົບການຊໍາລະທຸລະກໍາຍ່ອຍແຫ່ງຊາດໃນ ສປປ ລາວ ທີ່ມີເຮັດໜ້າທີ່ເປັນສື່ກາງໃນການເຮັດທຸລະກໍາຮ່ວມກັນດ້ວຍຫຼາຍຮູບແບບ ແລະ ຫຼາກຫຼາຍຊ່ອງທາງ. LAPNet ໄດ້ພັດທະນາລະບົບເພື່ອສ້າງຜະລິດຕະພັນໂອນເງິນຂ້າມທະນາຄານເທິງມືຖືທີ່ຈະຊ່ວຍອໍານວຍຄວາມສະດວກໃຫ້ມວນຊົນເຮັດທຸລະກໍາທາງການເງິນຢູ່ເທິງມືຖື ຕາມຄໍາຂວັນທີ່ວ່າ: “ທຸກທີ່ ທຸກເວລາ ທຸກຊ່ອງທາງການຊໍາລະ”.

ປະຈຸບັນ LAPNet ມີເຄືອຂ່າຍເຮັດທຸລະກໍາການນໍາໃຊ້ບັດທະນາຄານຮ່ວມກັນ ຫຼື ນໍາໃຊ້ຕູ້ ATM ຮ່ວມກັນໃນການຖອນເງິນສົດ,ກວດຍອດເງິນໃນບັນຊີຮ່ວມກັນໄດ້ 16 ທະນາຄານ ໃນນີ້ມີທະນາຄານການຄ້າຕ່າງປະເທດລາວມະຫາຊົນ; ທະນາຄານ ພັດທະນາລາວ;ທະນາຄານ ຫວຽດຕິນ ລາວ ຈໍາກັດ; ທະນາຄານ ອິນໂດຈີນ ຈໍາກັດ; ທະນາຄານ ຮ່ວມພັດທະນາ; ທະນາຄານ ເອຊີລີດາລາວ ຈໍາກັດ;ທະນາຄານສົ່ງເສີມກະສິກໍາ; ທະນາຄານ ບີໄອຊີ ລາວ ຈໍາກັດ; ທະນາຄານມາຣູຮານເຈແປນລາວ; ທະນາຄານ ຊາຄອມແບັງ ລາວ; ທະນາຄານຮ່ວມທຸລະກິດລາວ-ຫວຽດ; ທະນາຄານ ເອັສທີ ຈໍາກັດ; ທະນາຄານ ອຸດສະຫະກໍາ ແລະ ການຄ້າ ຈີນ; ທະນາຄານ ພາບລິກ ສາຂານະຄອນຫຼວງ; ທະນາຄານແຫ່ງປະເທດຈີນຈໍາກັດ ແລະ ທະນາຄານກະສິກອນໄທ ສາຂານະຄອນຫຼວງ.






ສຳລັບການໂອນເງິນຂ້າມທະນາຄານໂດຍຜ່ານຕູ້ ATM ໄດ້ມີ 10 ທະນາຄານຄື: ທະນາຄານພັດທະນາລາວ; ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ; ທະນາຄານສົ່ງເສີມກະສິກຳ; ທະນາຄານ ເອັສທີ ຈຳກັດ; ທະນາຄານ ບີໄອຊີລາວ ຈຳກັດ; ທະນາຄານຮ່ວມທຸລະກິດລາວ-ຫວຽດ; ທະນາຄານ ຮ່ວມພັດທະນາ; ທະນາຄານ ພາບລິກ ສາຂານະຄອນຫຼວງ; ທະນາຄານ ມາຣູຮານ ເຈແປນລາວ ແລະ ທະນາຄານກະສິກອນໄທ ສາຂານະຄອນຫຼວງ.

ໃນດ້ານຜະລິດຕະພັນໃໝ່ລ່າສຸດທີ່ໄດ້ອອກໃຫ້ມວນຊົນເລີ່ມນຳໃຊ້ແຕ່ວັນທີ 08/12/2020 ເປັນຕົ້ນໄປແມ່ນການໂອນເງິນເທິງມືຖື ໂດຍນຳໃຊ້ຮູບແບບສ້າງເປັນ QR Code ແມ່ນມີ 2 ທະນາຄານ ຄື: ທະນາຄານ ພັດທະນາລາວ ແລະ ທະນາຄານ ເອັສທີ ຈຳກັດ; ສ່ວນການໂອນເງິນເທິງມືຖືໂດຍນຳໃຊ້ຮູບແບບການໂອນ ບັນຊີຫາບັນຊີ ຫຼື ເອີ້ນວ່າ Account Fund transfer ແມ່ນແລ້ວ 5 ທະນາຄານຄື: ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານຮ່ວມທຸລະກິດລາວ - ຫວຽດ, ທະນາຄານຮ່ວມພັດທະນາ ແລະ ທະນາຄານ ບີໄອຊີລາວ ຈຳກັດ ຊຶ່ງໃນນັ້ນ ທະນາຄານ ສົ່ງເສີມກະສິກຳ ແມ່ນກຳລັງດຳເນີນການ ແລະ ຄາດວ່າຈະໃຫ້ສຳເລັດໃນໄຕມາດທີ 1 ຂອງປີ 2021.

**ທ່ານ** ທົງຄຳ ເພັດດາວົງ ຜູ້ອຳນວຍການ ບໍລິສັດ LAPNet ໄດ້ໃຫ້ຮູ້ວ່າ:"ໃນຕໍ່ໜ້າຈະໃຫ້ສາມາດຊຳລະຄ່າສິນຄ້າ ແລະ ຄ່າບໍລິການຕ່າງໆຢູ່ຮ້ານຄ້າໂດຍຜ່ານເຄື່ອງພີໂອເອສ, ຜ່ານ QR Code ຮ່ວມກັນໄດ້ຂອງບັນດາທະນາຄານທຸລະກິດ ແລະ ບໍລິສັດ Fintech ອື່ນທີ່ເປັນສະມາຊິກຂອງບໍລິສັດ LAPNet. ບໍລິສັດ LAPNet ຍັງໄດ້ຕັ້ງເປົ້າຜັນຂະຫຍາຍທຸລະກິດ ແລະ ວາງແຜນພັດທະນາລະບົບໂຄງລ່າງພື້ນຖານດ້ານການຊຳລະໃຫ້ມວນຊົນສາມາດເຮັດທຸລະກຳທາງການເງິນ ທີ່ທັນສະໄໝ, ປອດໄພ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ."

ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ ໄດ້ກ່າວວ່າ: ປະຈຸບັນມີ 7 ທະນາຄານ ທີ່ມີຄວາມພ້ອມໃນການໃຫ້ບໍລິການໂອນເງິນຂ້າມທະນາຄານຢູ່ເທິງມືຖືໄດ້ໃນເບື້ອງຕົ້ນ ຊຶ່ງສະແດງໃຫ້ເຫັນເຖິງສັກກະຍະພາບ ແລະ ພະລັງຄວາມສາມັກຄີຂອງບັນດາທ່ານທີ່ພ້ອມພາກັນຈັດຕັ້ງປະຕິບັດແຜນການພັດທະນາໃຫ້ເກີດດອກອອກຜົນ ແລະ ກ້າຈະສ້າງສິ່ງຫັນປ່ຽນສິ່ງໃໝ່ໆຢ່າງຕັ້ງໜ້າ ແລະ ດີເດັ່ນ. ຂ້າພະເຈົ້າ, ຂໍຝາກຄວາມຫວັງອັນແຮງກ້າ ແລະ ເຊື່ອໝັ້ນວ່າ ບໍລິສັດ LAPNet ແລະ ບັນດາທະນາຄານທຸລະກິດ ຈະມີບົດບາດຄວາມສຳຄັນທີ່ຊ່ວຍເຊີດຊູໃຫ້ທຸກຂະແໜງເງິນໃຫ້ມີຊ່ອງທາງການຊຳລະສິນຄ້າເຄື່ອງອຸປະໂພກ-ບໍລິໂພກທີ່ຫຼາກຫຼາຍເຮັດໃຫ້ທຸລະກຳທາງການເງິນມີຄວາມວ່ອງໄວທັນການ ອັນເປັນເຄື່ອງມືສຳຄັນໃນການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມໃຫ້ເຂັ້ມແຂງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ